## ເງື່ອນໄຂຮັບເອົາການສະລະສິດ

ຜູ້ຮັບການຊ່ວຍເຫລືອຕ້ອງສອດຄ່ອງນໍາກົດເກນຕໍ່ລົງໄປນີ້ທຸກໆຢ່າງ:

- ເປັນລູກຄ້າຜູ້ທີ່ມີເງື່ອນໄຂໄດ້ຮັບຂອງ DDA ອີງຕາມກົດໝາຍ RCW 71A.10.020(5).
- ມີຄວາມເສັຽອົງຄະອີງຕາມກົດເກນທີ່ຖືກກໍ່ຕັ້ງໄວ້ໃນກົດບັນຍັດ Social Security Act.
- ສະມັກຂໍເອົາການບໍຣິການປິ່ນປົວຣະຍະຍາວ/Medicaid ແລະມີຣາຍໄດ້ທີ່ຖືກພິສູດວ່າບໍ່ກາຍເກີນ 300% ຂອງມາຕຖານເງິນຊ່ວຍເຫລືອ SSI ຂອງຣັຖບານກາງ.
  - ຖ້າຫາກວ່າຣາຍໄດ້ແລະຊັບສິນຂອງລູກ,ພໍ່ແມ່ຈະບໍ່ຖືກພິຈາຣະນາເບິ່ງໃສ່.
  - ຖ້າຫາກວ່າຜູ້ໃຫຍ່ອາສັຍຢູ່ນໍາຄູ່ຜົວເມັຽ,ຣາຍໄດ້ແລະຊັບສິນຂອງຄູ່ຜົວເມັຽຈະບໍ່ຖືກພິຈາຣະນາເບິ່ງໃສ່.
- ມີຊັບສິນຕໍ່າກວ່າ $2,000 ຫລືຢູ່ໃນໂຄງການສໍາລັບພະນັກງານທີ່ມີຄວາມເສັຽອົງຄະຂອງ Apple Health.
- ແຜນການບໍຣິການຈຸດລວມໃສ່ບຸກຄົນສະແດງໃຫ້ເຫັນວ່າຄວາມຕ້ອງການດ້ານສຸຂະພາບ,ຄວາມປອດພັຍແລະການປັບໂຕສາມາດຖືກຕອບສນອງໄດ້ແນວໃດຢູ່ໃນຊຸມນຸມຊົນດ້ວຍການບໍຣິການສະລະສິດປະຈໍາເດືອນແລະ/ຫລືການກໍາກັບເບິ່ງນໍາແຕ່ລະເດືອນ.
- ຕົກລົງເຫັນພ້ອມທີ່ຈະຮັບເອົາການບໍຣິການອີງຕາມເຮືອນແລະຊຸມນຸມຊົນແທນທີ່ວ່າຈະຮັບເອົາ ICF/IID.
- ສໍາລັບ CIIBS ເທົ່ານັ້ນ,ຜູ້ຮັບການຊ່ວຍເຫລືອຍັງຈະຕ້ອງ:
  - ມີອາຍຸ 8 ປີຮອດ 17 ປີສໍາລັບການຈົດຊື່ເຂົ້ານໍາຂັ້ນຕົ້ນ (ຖືກຮັບໃຊ້ໄປຮອດອາຍຸ 20 ປີ);
  - ຖືກຕີຣາຄາເບິ່ງໃນຂັ້ນຕົ້ນວ່າຢູ່ໃນການສ່ຽງອັນຕະຣາຍສູງຫລືຮ້າຍແຮງຂອງການຈັດຫາໃຫ້ຢູ່ນອກເຮືອນຍ້ອນການປະພຶດທີ່ເຮັດນໍາຍາກ;ແລະ
  - ອາສັຍຢູ່ນໍາຄອບຄົວຜູ້ທີ່ເຫັນພ້ອມທີ່ຈະເຂົ້າຮ່ວມຢູ່ໃນໂຄງການ CIIBS.
- ສໍາລັບ IFS ເທົ່ານັ້ນ,ຜູ້ຮັບການຊ່ວຍເຫລືອຍັງຈະຕ້ອງ:
  - ອາສັຍຢູ່ໃນເຮືອນຂອງຄອບຄົວ.
- ສໍາລັບ Community Protection ເທົ່ານັ້ນ,ຜູ້ຮັບການຊ່ວຍເຫລືອຍັງຈະຕ້ອງ:
  - ມີອາຍຸ 18 ປີຫລືແກ່ກວ່າ;ແລະ
  - ສອດຄ່ອງນໍາກົດເກນຂອງເງື່ອນໄຂຮັບເອົາຢູ່ໃນກົດໝາຍ WAC 388-831-0030.

## ການເຂົ້າເຖິງການສະລະສິດ

ຄໍາຮ້ອງຂໍຈົດຊື່ເຂົ້າໃສ່,ຫລືເພື່ອຈະປ່ຽນມາໃສ່ການສະລະສິດແນວຕ່າງສາມາດຖືກເຮັດໄດ້ໃນທຸກໆເວລາ.ຈົ່ງສອບຖາມນໍາຜູ້ຈັດການຊ່ວຍເຫລືອເອກສານ.ຖ້າຫາກວ່າCRM ບໍ່ວ່າງ,ສົ່ງຄວາມໄວ້ນໍາສາຍບໍຣິການບໍ່ໄດ້ເສັຽເງິນທ້ອງຖິ່ນຂອງທ່ານຫລືຍື່ນຄໍາຮ້ອງຂໍໄປທາງອອນລາຍນ໌ໄດ້ທີ່ www.dshs.wa.gov/dda/service-and-information-request.

ການສອດຄ່ອງນໍາກົດເກນຂອງການສະລະສິດບໍ່ໄດ້ຮັບປະກັນການເຂົ້າເຖິງການບໍຣິການການສະລະສິດ.ການສະລະສິດແຕ່ລະອັນມີກໍານົດໃນຈໍານວນຄົນຜູ້ທີ່ສາມາດຖືກຮັບໃຊ້. ຜະແນກ DDA ມີສິດອໍານາດທີ່ຈະຈໍາກັດການຈົດຊື່ເຂົ້າໃສ່ໃນການສະລະສິດໂດຍອີງຕາມການມີໄວ້ໃຫ້ໃນເງິນທຶນສໍາລັບຜູ້ເຂົ້າຮ່ວມໃນການສະລະສິດຄົນໃໝ່.

## ສິດທິການຟັງເຣື່ອງຈາກອໍານາດການປົກຄອງ

ທຸກໆຄົນມີສິດທິໃນການຟັງເຣື່ອງຈາກອໍານາດການປົກຄອງກ່ຽວກັບການຕັດສິນຕໍ່ລົງໄປນີ້ແນວໃດແນວນຶ່ງບໍ່ກ່ຽວກັບໂຄງການຫລືການບໍຣິການ:

- ເງື່ອນໄຂໄດ້ຮັບ DDA ໄດ້ຖືກປະຕິເສດ,ຕັດຫລືຜະແນກ DDA ໄດ້ຖ່ວງດຶງຢ່າງບໍ່ມີເຫດຜົນໃນການດໍາເນີນການຄໍາຮ້ອງຂອງທ່ານ;ຫລື
- ຊະນິດຫລືຈໍານວນຂອງການບໍຣິການທີ່ທ່ານໄດ້ຖືກອະນຸມັດໃຫ້ໄດ້ຮັບ;ຫລື
- ການປະຕິເສດ,ການລຸດລົງຫລືການຕັດການບໍຣິການ;ຫລື
- ການປະຕິເສດທາງເລືອກເອົາຜູ້ໃຫ້ການບໍຣິການ;ຫລື
- ຖ້າຫາກວ່າໄດ້ຍ້າຍໄປຫາບ່ອນຢູ່ອາສັຍແບບຕ່າງ,ບໍ່ແມ່ນບ່ອນທີ່ຄົນໃດຄົນນຶ່ງເລືອກເອົາ;ຫລື
- ການປະຕິເສດຂອງຜະແນກ DDA ທີ່ຈະປະຕິບັດຕາມຄໍາຮ້ອງຂໍວ່າບໍ່ໃຫ້ສົ່ງໃບແຈ້ງການໄປຫາຄົນອື່ນຄົນໃດຄົນນຶ່ງ;ຫລື
- ການເຊົາຈົດຊື່ຈາກໂຄງການສະລະສິດ;ຫລື
- ການປະຕິເສດໃນຄໍາຮ້ອງຂໍຂອງທ່ານເພື່ອຈະຮັບເອົາການບໍຣິການ ICF/IID ແທນທີ່ວ່າຈະເປັນການບໍຣິການສະລະສິດ;ຫລື
- ຜະແນກ DDA ຕັດສິນວ່າການບໍຣິການທີ່ມີຢູ່ໃນການສະລະສິດປັດຈຸບັນຂອງທ່ານສາມາດຕອບສະນອງຄວາມຕ້ອງການການດ້ານສຸຂະພາບແລະຄວາມຢູ່ດີມີແຮງຂອງທ່ານແລະທ່ານບໍ່ເຫັນນໍາ;ຫລື
- ບຸກຄົນຈະຖືກຕີຣາຄາປະເມີນຜົນວ່າບໍ່ຕ້ອງການຣະດັບການປິ່ນປົວ ICF/IID; ຫລື
- ຄົນໃດຄົນນຶ່ງໄດ້ຖືກຕີຣາຄາປະເມີນຜົນວ່າບໍ່ສອດຄ່ອງນໍາເງື່ອນໄຂໄດ້ຮັບຂອງ CIIBS.




**ທ້ອງຖິ່ນ 1**
Counties: Chelan, Douglas, Ferry, Grant, Lincoln, Okanogan, Pend Orielle, Spokane, Stevens
ເລກໂທຣະສັບຟຣີ: 1-800-319-7116
ອີແມລ: R1ServiceRequestA@dshs.wa.gov

**ທ້ອງຖິ່ນ 1**
Counties: Adams, Asotin, Benton, Columbia, Franklin, Garfield, Kittitas, Klickitat, Walla Walla, Whitman, Yakima
ເລກໂທຣະສັບຟຣີ: 1-866-715-3646
ອີແມລ: R1ServiceRequestB@dshs.wa.gov

**ທ້ອງຖິ່ນ 2**
Counties: Island, San Juan, Skagit, Snohomish, Whatcom
ເລກໂທຣະສັບຟຣີ: 1-800-567-5582
ອີແມລ: R2ServiceRequestA@dshs.wa.gov

**ທ້ອງຖິ່ນ 2**
County: King
ເລກໂທຣະສັບຟຣີ: 1-800-974-4428
ອີແມລ: R2ServiceRequestB@dshs.wa.gov

**ທ້ອງຖິ່ນ 3**
Counties: Kitsap, Pierce
ເລກໂທຣະສັບຟຣີ: 1-800-735-6740
ອີແມລ: R3ServiceRequestA@dshs.wa.gov

**ທ້ອງຖິ່ນ 3**
Counties: Clallam, Clark, Cowlitz, Grays Harbor, Jefferson, Lewis, Mason, Pacific, Skamania, Thurston, Wahkiakum
ເລກໂທຣະສັບຟຣີ: 1-888-707-1202
ອີແມລ: R3ServiceRequestB@dshs.wa.gov

ບຸກຄົນຜູ້ທີ່ມີການສູນເສັຽການຟັງສຽງຫລືມີຄວາມເສັຽອົງຄະນໍາການປາກເວົ້າສາມາດໂທຫາຜະແນກ Telecommunication Relay Service ຂອງຣັດວໍຊິງຕັນໄດ້ໂດຍການບີບເລກ 7-1-1 ຫລື 1-800-833-6388 (TTY)

ເພື່ອຣາຍຣະອຽດເພີ້ມເຕີມ,ແວ່ເຂົ້າປັຽມແວບໄຊທ໌ຂອງ DDA ໄດ້ທີ່:

**www.dshs.wa.gov/dda**

Washington State Department of Social & Health Services

*Transforming lives*

DSHS 22-605 LA (Rev. 11/20) Laotian

# ການບໍຣິການ ສະລະສິດຢູ່ຕາມເຮືອນ ແລະຊຸມນຸມຊົນ

ຈາກ **Developmental Disabilities Administration**



Washington State Department of Social & Health Services

*Transforming lives*

## ການອະທິບາຍໂດຍສະລູບຄວາມຂອງການສະລະສິດ

Department of Social and Health Services' Developmental Disabilities Administration (DDA) ມີໂຄງການສະລະສິດຂອງ Home and Community-Based Service Medicaid ຫ້າໂຄງການ.

ໂຄງການສະລະສິດແຕ່ລະໂຄງການໃຫ້ການບໍລິການເຈາະຈົງເພື່ອຈະຕອບສະນອງຄວາມຕ້ອງການທາງດ້ານສຸຂະພາບແລະຄວາມປອດພັຍຢູ່ໃນຊຸມນຸມຊົນ.ການສະລະສິດແຕ່ລະຢ່າງສະເນີການບໍລິການມາກມາຍຫລາຍຢ່າງເມື່ອເວລາມັນບໍ່ມີຜ່ານບ່ອນຊ່ວຍເຫລືອບ່ອນອື່ນໆຫລາຍໆບ່ອນ (ປະກັນພັຍເອກຊົນ, Medicaid, ໂຮງຮຽນ,ອື່ນໆ)

**ການບໍລິການສ່ວນບຸກຄົນແລະຄອບຄົວ** ອູ້ມຊູບຸກຄົນຜູ້ທີ່ຕ້ອງການການບໍລິການສະລະສິດເພື່ອຈະຍັງຢູ່ໃນເຮືອນຂອງຄອບຄົວ. *ອາຍຸແຕ່ເກີດ+*

**Basic Plus** ອູ້ມຊູບຸກຄົນຜູ້ທີ່ຕ້ອງການການບໍລິການສະລະສິດເພື່ອຈະຕອບສະນອງຄວາມຕ້ອງການດ້ານສຸຂະພາບແລະຄວາມປອດພັຍທີ່ຖືກຕີຣາຄາປະເມີນຜົນເບິ່ງຂອງເຂົາເຈົ້າຢູ່ໃນຊຸມນຸມຊົນ.ການບໍລິການຖືກເອົາໃຫ້ໄດ້ຢູ່ໃນເຮືອນຂອງເຂົາເຈົ້າເອງ,ເຮືອນຂອງຄອບຄົວ,ເຮືອນຄອບຄົບຜູ້ໃຫຍ່ຫລືສູນກາງບ່ອນຢູ່ອາສັຍຂອງຜູ້ໃຫຍ່. *ອາຍຸແຕ່ເກີດ+*

ການສະລະສິດ **Core** ເອື້ອເຟື້ອທາງເລືອກຢູ່ເຮືອນໃຫ້ແກ່ບຸກຄົນທີ່ຕົກຢູ່ໃນອັນຕະຣາຍໃນປັດຈຸບັນຂອງການຈັດໃຫ້ຢູ່ໃນໂຮງພະຍາບານຫລືຜູ້ທີ່ມີຄວາມຕ້ອງການດ້ານສຸຂະພາບແລະຄວາມຢູ່ດີມີແຮງທີ່ໄດ້ຖືກຊີ້ບອກຊຶ່ງບໍ່ສາມາດຖືກຕອບສະນອງໄດ້ໂດຍການສະລະສິດ Basic Plus. *ອາຍຸແຕ່ເກີດ+*

**ໂຄງການອູ້ມຊູການປະພຶດຢູ່ໃນເຮືອນອັນເຂັ້ມງວດຂອງເດັກນ້ອຍ** ອູ້ມຊູຊາວຫນຸ່ມທີ່ຢູ່ໃນການສ່ຽງອັນຕະຣາຍຕໍ່ການຈັດໃຫ້ຢູ່ນອກເຮືອນຍ້ອນການປະພຶດທີ່ບໍ່ດີ.ແບບຢ່າງຂອງ CIIBS ກ່ຽວພັນນຳການວາງແຜນອ້ອມລ້ອມແລະການອູ້ມຊູການປະພຶດທີ່ດີແນສູນໃສ່ຄອບຄົວ.ອາຍຸ 8-20 ປີ

**ການປ້ອງກັນຊຸມນຸມຊົນ** ການສະລະສິດເອື້ອເຟື້ອການອູ້ມຊູການປິ່ນປົວຢູ່ຕາມເຮືອນສຳລັບບຸກຄົນຜູ້ທີ່ຕ້ອງການການຄວບຄຸມເບິ່ງນຳຈາກພະນັກງານຢູ່ຕາມສະຖານທີ່ຕະລອດ 24-ຊົ່ວໂມງເພື່ອຈະຮັບປະກັນຄວາມປອດພັຍຂອງຄົນອື່ນ.ຜູ້ເຂົ້າຮ່ວມເຫັນພ້ອມນຳຕາມສະມັກໃຈທີ່ຈະປະຕິບັດຕາມຂອບເຂດກຳນົດຂອງການປ້ອງກັນຊຸມຊຸມນຸມຊົນ. *ອາຍຸ 18+ປີ*



## ການບໍລິການສະລະສິດ

ໃຊ້ປື້ມຄູ່ມືຫົວນີ້ເພື່ອຈະວາງແຜນການຕີຣາຄາປະເມີນຜົນປະຈຳປີ.ຜູ້ຈັດການຊ່ວຍເຫລືອເອກສານຈະອະທິບາຍການບໍລິການແລະການບໍລິການເອກສານທີ່ຖືກເລືອກເອົາໃນແຜນການບໍລິການລວມສູນໃສ່ບຸກຄົນ.ການບໍລິການບາງຢ່າງຕ້ອງມີການກວດເບິ່ງຄືນແລະການອະນຸມັດກ່ອນທີ່ທ່ານຈະສາມາດໄດ້ຮັບມັນ.ສອບຖາມນຳ CRM ກ່ຽວກັບຣາຍຣະອຽດແນວໃດແດ່ທີ່ຕ້ອງການກ່ອນການອະນຸມັດ.ການບໍລິການໃນສີ່ຂະແນງນຳການສະລະສິດແລະຂອບເຂດຂອງອາຍຸລວມເອົາ:

- **ການບໍລິການຕາມຊຸມນຸມຊົນ** – ສົ່ງເສີມການເຂົ້າຮ່ວມນຳແລະການຜະສົມຜະສານເຂົ້າໃນຊຸມນຸມຊົນ
- **ການບໍລິການຈາກນັກວິຊາການ** – ການບໍລິການອູ້ມຊູທີ່ຖືກເອົາໃຫ້ໂດຍນັກວິຊາການທີ່ມີສັນຍັນຳ
- **ການບໍລິການໃຫ້ການເບິ່ງແຍງດູແລ** – ການອູ້ມຊູສຳລັບຜູ້ເຂົ້າຮ່ວມນຳແລະຜູ້ເບິ່ງແຍງດູແລ
- **ຜະລິດທະພັນແລະການບໍລິການ** – ອຸປກອນ,ເຄື່ອງໃຊ້ສອຍແລະການບໍລິການພິເສດສຳລັບຜູ້ເຂົ້າຮ່ວມ

## ການບໍລິການຢູ່ຕາມຊຸມນຸມຊົນ

- ☐ **ການພົວພັນນຳຊຸມນຸມຊົນ** – ການບໍລິການເພື່ອຈະເພີ້ມການຕິດແທດໃສ່ແລະການພົວພັນໃນການອູ້ມຊູຊຸມນຸມຊົນ. *IFS, Basic Plus, Core*
- ☐ **ການລວມຕົວເຂົ້ານຳຊຸມນຸມຊົນ** – ການບໍລິການອູ້ມຊູສ່ວນບຸກຄົນຕິດແທດບຸກຄົນເຂົ້າໃນຊຸມນຸມຊົນທ້ອງຖິ່ນເພື່ອຈະກໍ່ສ້າງຄວາມສັມພັນແລະມິດຕະພາບນຳຄົນອື່ນຜູ້ທີ່ແລກປ່ຽນຄວາມສົນໃຈທີ່ຄ້າຍຄຽງກັນ. *ການສະລະສິດ Basic Plus, Core ເທົ່ານັ້ນ*
- ☐ **ການໃຫ້ຄຳປຶກສາຫມູ່ພວກ** – ຜູ້ໃຫ້ຄຳປຶກສາຂອງຫມູ່ພວກໃຊ້ປະສົບປະການສ່ວນຕົວເພື່ອຈະໃຫ້ການອູ້ມຊູແລະຄຳຊີ້ນຳ.*ການສະລະສິດ IFS ເທົ່ານັ້ນ*
- ☐ **ການອຳນວຍຄວາມສະດວກໃນແຜນການຈຸດລວມໃສ່ບຸກຄົນ** – ການດຳເນີນການວາງແຜນຊີວິດເພື່ອຈະເພີ້ມຄວາມຫມັ້ນໃຈໃນຕົນເອງແລະອອກແບບແຜນການກະທຳ.*ການສະລະສິດ IFS ເທົ່ານັ້ນ*
- ☐ **ການບໍລິການເຮັດໃຫ້ຄືນສູ່ສະພາບເດີມຢູ່ຕາມເຮືອນ** – ການຊ່ວຍເຫລືອເພື່ອຈະຮຽນຮູ້,ສົ່ງເສີມໃຫ້ດີຂຶ້ນ,ຫລືຮັກສາເອົາໄວ້ຄວາມຊຳນານທາງດ້ານສັງຄົມແລະການປັບຕົວເຂົ້າສຳລັບການດຳຣົງຊີວິດຢູ່ໃນຊຸມນຸມຊົນ. *ການສະລະສິດ Core, CP ເທົ່ານັ້ນ*
- ☐ **ວຽກງານທີ່ຖືກອູ້ມຊູ** – ການອູ້ມຊູສ່ວນຕົວແລະເປັນກຸ່ມໄກ້ສິດ, ຕລອດໄປເພື່ອຈະໄດ້ວຽກງານແລະຮັກສາວຽກງານໄວ. *ການສະລະສິດ Basic Plus, Core, CP ເທົ່ານັ້ນ. 21+*
- ☐ **ການຂົນສົ່ງ** – ການສົ່ງເງິນແທນຄືນໃຫ້ແກ່ຜູ້ໃຫ້ການບໍລິການສຳລັບການຂົນສົ່ງທີ່ບໍ່ກ່ຽວກັບການພະຍາບານຊຶ່ງຕ້ອງມີເພື່ອຈະເຂົ້າເຖິງການບໍລິການສະລະສິດທີ່ຖືກເຈາະຈົງຢູ່ໃນແຜນການ PCSP.

## ການບໍລິການຈາກນັກວິຊາການ

- ☐ **ການບໍລິການເຮັດໃຫ້ຫຸ່ມທ່ຽງ** – ກິຈກັມທີ່ຈະຊ່ວຍເຫລືອຄົນໃດຄົນນຶ່ງໃນຣະຫວ່າງພາວະເດືອດຮ້ອນສຸຂະພາບການປະພຶດ.ອັນນີ້ລວມເອົາການພັກຟື້ນພິເສດ,ການປຶກສາພະນັກງານ/ຄອບຄົວແລະປິ່ນປົວນອນໂຮງຫມໍໃນພາວະສຸກເສີນ.
- ☐ **ການບຳບັດດ້ວຍສຽງດົນຕຣີ** – ການເຂົ້າແຊກແຊງດ້ວຍສຽງດົນຕຣີເພື່ອຈະສົ່ງເສີມຄວາມຄືບຫນ້າໃນຈຸດເປົ້າຫມາຍສ່ວນບຸກຄົນ. *ການສະລະສິດ CIIBS ເທົ່ານັ້ນ*
- ☐ **ການບຳບັດດ້ວຍການສະເງີບອາຣົມ** – ການເຂົ້າແຊກແຊງດ້ວຍສຽງດົນຕຣີເພື່ອຈະສົ່ງເສີມຄວາມຄືບຫນ້າໃນຈຸດເປົ້າຫມາຍສ່ວນບຸກຄົນ. *ການສະລະສິດ CIIBS ເທົ່ານັ້ນ*
- ☐ **ການອູ້ມຊູແລະການໃຫ້ຄຳປຶກສາເຣື່ອງການປະພຶດທີ່ດີ** – ການອູ້ມຊູທີ່ຕີຣາຄາປະເມີນຜົນແລະແກ້ໄຂຄວາມຕ້ອງການໃນສຸຂະພາບການປະພຶດ.ສິ່ງເຫລົ່ານີ້ລວມເອົາການເຂົ້າແຊກແຊງນຳໂດຍກົງເພື່ອຈະສົ່ງເສີມການປະພຶດທີ່ສົ່ງເສີມຄຸນນະພາບຂອງຊີວິດໃຫ້ດີຂຶ້ນແລະການລວມເຂົ້າຢູ່ນຳຊຸມນຸມຊົນ. *0-20 ຍົກເວັ້ນ CP 18+*
- ☐ **ການຕີຣາຄາປະເມີນຜົນເບິ່ງການສ່ຽງອັນຕະຣາຍ** – ການຕີຣາຄາເບິ່ງການປະພຶດທີ່ຮ້າຍແຮງ,ເຝົ້າຣົບກວນ,ຮຸນແຮງທາງເພດ,ຫລືທີ່ຖືກຂະໂມຍມາເພື່ອຈະພິຈາຣະນາເບິ່ງຄວາມຕ້ອງການສຳລັບການບໍລິການປິ່ນປົວໂຣກຈິດ,ການພະຍາບານຫລືການບຳບັດ.
- ☐ **ການໃຫ້ຄຳປຶກສາແລະການຝຶກຝົນພະນັກງານ/ຄອບຄົວ** – ການໃຫ້ຄຳປຶກສາຈາກຜູ້ຊ່ຽວຊານແກ່ຄອບຄົວແລະຊີ້ນຳຜູ້ໃຫ້ການບໍລິການເພື່ອຈະຕອບສະນອງຄວາມຕ້ອງການຂອງບຸກຄົນໃຫ້ດີກວ່າເກົ່າ.
  *ການໃຫ້ຄຳປຶກສາກໍມີໄວ້ໃຫ້ສຳລັບການສະລະສິດ IFS, Basic Plus, CIIBS ເທົ່ານັ້ນ.*
- ☐ **ການລ້ຽງລູກທີ່ຖືກອູ້ມຊູ** – ການບໍລິການລວມເອົາການສອນ,ການແນະນຳການລ້ຽງລູກ, ແລະຍຸດທະວິທີການອູ້ມຊູອື່ນໆ. *ການສະລະສິດ IFS ເທົ່ານັ້ນ*
- ☐ **ການບຳບັດຮັກສາ** – ການບໍລິການດ້ານວິຊາຊີບ,ຮ່າງກາຍແລະການປາກເວົ້າ,ພາສາແລະການຟັງສຽງນອກເຫນືອຈາກອັນທີ່ໄດ້ຖືກເອົາໃຫ້ໂດຍ. *ການສະລະສິດ IFS, Basic Plus, Core, CP ເທົ່ານັ້ນ.ອາຍຸ 21+ປີ*

## ການບໍລິການໃຫ້ການເບິ່ງແຍງດູແລ

- ☐ **ການປິ່ນປົວຊຳຊາຊົ່ວຄາວ** – - ການຜ່ອນຄາຍຣະຍະສັ້ນໃຫ້ແກ່ບຸກຄົນຜູ້ທີ່ອາສັຍຢູ່ນຳແລະເບິ່ງແຍງດູແລບຸກຄົນທີ່ມີຄວາມເສັຽອົງຄະ *ການສະລະສິດ IFS, Basic Plus, Core, CIIBS ເທົ່ານັ້ນ*
- ☐ **ການເບິ່ງແຍງຜູ້ເຖົ້າທີ່ມີຄວາມຊຳນານ** – ການບໍລິການຊຳເຮື້ອ,ຣະຍະຍາວ,ເບິ່ງແຍງຜູ້ເຖົ້າຫລືຜູ້ທີ່ບໍ່ແຂງແຮງເພື່ອຈະແກ້ໄຂຄວາມຕ້ອງການທີ່ບໍ່ຖືກຕອບສະນອງເທື່ອໂດຍຜ່ານ Medicaid (Apple Care). *ການສະລະສິດ IFS, Basic Plus, Core, CP ເທົ່ານັ້ນ. 21+*

## ຜະລິດທະພັນແລະການບໍລິການ

- ☐ **ເທັກໂນໂລຈີຊ່ວຍເຫລືອ** – ຜະລິດທະພັນແລະການຝຶກຝົນທີ່ຖືກໃຊ້ເພື່ອຈະເພີ້ມພູນສົ່ງເສີມຫລືຮັກສາຄວາມສາມາດ. *ການສະລະສິດ IFS, CIIBS ເທົ່ານັ້ນ*
- ☐ **ການກຳຈັດມັດແມງຢູ່ໃນຕຽງ** – ການກຳຈັດກວດລ້າງມັດແມງຢູ່ໃນຕຽງຢູ່ໃນເຮືອນ. *ການສະລະສິດ Basic Plus, Core, CP ເທົ່ານັ້ນ*
- ☐ **ການປັບຕົວໃຫ້ເຂົ້າກັບສະພາບແວດລ້ອມ** – ການດັດແປງແກ້ໄຂຮູບຮ່າງລັກສະນະໃສ່ເຮືອນທີ່ຈຳເປັນສຳລັບຄົນໃດຄົນນຶ່ງເພື່ອຈະດຳເນີນອາສັຍຢູ່ໃນຊຸມນຸມຊົນ.
- ☐ **ເຄື່ອງນຸ່ງພິເສດ** – ເຄື່ອງນຸ່ງຫົ່ມບໍ່ມີສິ່ງກີດກັ້ນທີ່ຖືກດັດແປງໃສ່ຄວາມຕ້ອງການຂອງຄວາມເສັຽອົງຄະ. *ການສະລະສິດ IFS, CIIBS ເທົ່ານັ້ນ*
- ☐ **ອຸປະກອນແລະເຄື່ອງໃຊ້ໃນການພະຍາບານພິເສດ** – ອຸປກອນແລະເຄື່ອງໃຊ້ຈຳເປັນດ້ານການພະຍາບານທີ່ບໍ່ມີໄວ້ໃຫ້ພາຍໄຕ້ໂຄງການ Medicaid (Apple Care) ລວມທັງສິ່ງທີ່ຕ້ອງການເພື່ອຈະວາງໃຊ້ແຜນການອູ້ມຊູການບຳບັດຫລືປະພຶດທີ່ດີ.
- ☐ **ການດັດແປງໃຫ້ເຂົ້າກັບການບຳບັດປິ່ນປົວ** – ການດັດແປງຕໍ່ສະພາບແວດລ້ອມຂອງເຮືອນເພື່ອຈະລຸດຜ່ອນຫລືກຳຈັດສິ່ງເຮັດໃຫ້ມີຄວາມຕຶງຄຽດ. *ການສະລະສິດ IFS, Basic Plus, CIIBS ເທົ່ານັ້ນ*
- ☐ **ການດັດແປງຍານພາຫານະ** – ການດັດແປງໃຫ້ເຫມາະສົມຕໍ່ຍານພາຫານະເພື່ອຈະອຳນວຍຄວາມສະດວກຄວາມຕ້ອງການຂອງທ່ານແລະອູ້ມຊູການປັບຕົວເຂົ້າເຕັມທີ່ໃນຊຸມນຸມຊົນ. *ການສະລະສິດ IFS, CIIBS ເທົ່ານັ້ນ*
- ☐ **ການສຶກສາເຣື່ອງຄວາມຢູ່ດີມີແຮງ** – ຫນັງສືການສຶກສາທີ່ຖືກພິມອອກມາສຳລັບສ່ວນບຸກຄົນປະຈຳເດືອນທີ່ຖືກອອກແບບມາເພື່ອຈະຊ່ວຍເຫລືອໃນການກຳກັບຄວບຄຸມບັນຫາທີ່ກ່ຽວຂ້ອງນຳສຸຂະພາບແລະການບັນລຸເປົ້າຫມາຍຄວາມຢູ່ດີມີແຮງ. *ການສະລະສິດ IFS, Basic Plus, Core ເທົ່ານັ້ນ*